WAT VELOUVANARAM
ASSOCIATION DES MOINES
BOUDDHISTES LAO EN FRANCE

# ວັດເວລຸວະນາຣາມ

## ພຸທສະມາຄົມພຣະສົງຄ໌ລາວ
## ທີ່ປະເທດຝຣັ່ງເສສ

## ຂ່າວບຸນອັຕຖະສາມັຄຄີ

**ວັດເວລຸວະນາຣາມ ເມືອງ Bussy Saint Georges**

**ວັນເສົາ ວັນທີ 29 ທັນທາ 2018 (samedi 29 décembre 2018)**

ຈເຣີນພອນ ມາຍັງທ່ານພຸທບໍຣິສັດທັງຫລາຍ ອຸປາສົກ ອຸປາສິກາ ທ່ານຍິງ ທ່ານຊາຍ ທີ່ຮັກແພງແລະນັບຖື.
ອາຕະມາພາບ ພຣະອາຈາຣຍ໌ຈັນທີ ສຸພັນທະວົງສ໌ ເຈົ້າອາວາສ ວັດເວລຸວະນາຣາມ ພ້ອມດ້ວຍພຣະສົງຄ໌ ພາຍນອກມີຄນະກັມມະການອູ້ມຊູການບໍຣິຫານ ແລະອອກຕົນຍາຕໂຍມຜູ້ອຸປະຖັມວັດວາສາສນາມີຄວາມພ້ອມພຽງກັນເປັນເອກະສັນ ຣະລຶກເຖິງຜູ້ມີອຸປະກາຣະຄຸນ ຄວນເຄົາຣົບ ສັກະຣະບູຊາຢ່າງສູງຫມາຍມີ:
ອະດີດ ສົມເດັຈພຣະສັງຄະຣາຊເຈົ້າຣາຊຄຣູຫລວງໂພນສະເມັກ (ຍາທ່ານເຈົ້າຣາຊຄຣູຂີ້ຫອມ)ວັດຫລວງໃຫມ່ສມັຍເຈົ້າຫນໍ່ກະສັຕຍ໌ ປົກຄອງແຄ້ວນຈຳປາສັກສ໌ພຣະຣາຊອານາຈັກລາວ.
ສົມເດັຈພຣະພຸທທະຊິໂນຣົສ ສະກົລມະຫາສັງຄະປາໂມກຂ໌ ສົມເດັຈພຣະສັງຄະຣາຊ ທັມມະ ຍານະມະຫາເຖຣະ (ອະດີດສົມເດັຈພຣະສັງຄະຣາຊ) ແຫ່ງພຣະຣາຊອານາຈັກລາວພ້ອມດ້ວຍພຣະອາຈາຣຍ໌ທີ່ໄດ້ສິ້ນພຣະຊົນຍ໌ແລະມໍຣະນະພາບໄປແລ້ວນັ້ນ ລ້ວນແລ້ວແຕ່ເປັນພຣະມະຫາເຖຣະຜູ້ໃຫຍ່ ຄວນທີ່ຈະເຖີດທູນຮັກສາຄຸນງາມຄວາມດີຂອງເພິ່ນໄວ້ໃຫ້ອະນຸຊົນຫລັງໄດ້ຈາຣຶກໄວ້.

ດ້ວຍເຫຕນີ້ ອາຕມາພາບຈຶ່ງມີຫນັງສືຂ່າວບຸນອັຕຖະສາມັຄຄີນີ້ມາຈະເຣີນພອນຂໍຄວາມເມຕຕາທັມຈາກທ່ານ ແລະຂໍເຊີນ ທ່ານທັງຫລາຍໄດ້ເສັຽສະລະ ເວລາ ເຫື່ອແຮງ ແລະປັຈຈັຍ ມາປະກອບສ່ວນຮ່ວມໃນງານບຸນຄັ້ງນີ້ ເພື່ອເປັນການອຸປະຖັມຄ້ຳຊູ ວັດວາ ສາສນາໃຫ້ຈເຣີນຮຸ່ງເຮືອງຕລອດໄປ.
ພ້ອມກັນດຽວນີ້ອາຕະມາພາບຂໍອາຣາທະນາຄຸນພຣະສີຣັຕນະຕຣັຍ ແລະ ສິ່ງສັກສິດ ໃນສາກົນລະໂລກນີ້ຈົ່ງສະເດັຈລົງມາຄູ້ມຄອງ ປົກປັກຮັກສາທ່ານ ພ້ອມດ້ວຍຄອບຄົວ ຈົ່ງໄດ້ຮັບໂຊກລາບແມ່ນຈະປາຖນາສິ່ງນຶ່ງປະການໃດກໍດີຂໍໃຫ້ສຳເຣັດຕາມຄວາມປາຖນາ ທຸກປະການດ້ວຍເທີ້ນ ຂໍຈະເຣີນພອນມາດ້ວຍຄວາມເມຕຕາທັມ.

## ກຳນົດກາລເວລາ ແລະສຖານທີ່:

ທີ່ ວັດເວລຸວະນາຣາມ 5 allée Mme de MONTESPAN 77600 BUSSY SAINT GEORGES
ວັນເສົາ ວັນທີ 29 ທັນວາ 2018 (samedi 29 décembre 2018)
ເວລາ 09h30: ເຕົ້າໂຮມຍາຕໂຍມ ອຸປາສົກ ອຸປາສິກາ
ເວລາ 10h00: ໄຫວ້ພຣະຮັບສິລ ແລະຕັກບາຕ
ເວລາ 11h00: ຖວາຍພັຕຕາຫານເພນແດ່ພຣະສົງຄ໌
ເວລາ 12h00: ອອກຕົນຍາຕໂຍມຮັບປະທານອາຫານຮ່ວມກັນ
ເວລາ 13h30: ຖວາຍປັຈຈັຍທັຍທານ ກອງອັຕຖະສາມັຄຄີ ຟັງທັມມະເທສນາ ຄາຣະວະ ຮັບພອນ ຢາດນ້ຳ ຈົບພິທີ.

ວັດເວລູວະນາຣາມ, ທີ 8 ທັນວາ 2018
ສົມເດັດພຣະອຸປາລີ ເມທີຈາຣຍ໌ ຈັນທີ ສຸພັນທະວົງສ໌